ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 808 /ຣສສ

ນະຄອນຫຼວງວຽງຈັນ, ວັນທີ 09 FEB 2015

ວຽກ ພ/ນ 20/3/14

# ແຈ້ງການແນະນຳ

## ກ່ຽວກັບການປັບປຸງຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ຢູ່ ສປປ ລາວ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 138/ນຍ, ລົງວັນທີ 04 ພຶດສະພາ 2007.
- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນ ທັນວາ 2014 ສະບັບເລກທີ 01/ລບ, ລົງວັນທີ 06 ມັງກອນ 2015 ຂໍ້ທີ IV ວັກ 2, ກອງປະຊຸມເຫັນດີໃຫ້ປັບປຸງຄ່າແຮງງານຂັ້ນຕ່ຳສຸດ.

### ລັດຖະມົນຕີວ່າການ

### ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກແຈ້ງການແນະນຳດັ່ງນີ້:

## I. ຈຸດປະສົງ

1.1. ເພື່ອປັບປຸງການດຳລົງຊີວິດຂອງຊາວຜູ້ອອກແຮງງານໃນຫົວໜ່ວຍການຜະລິດ, ທຸລະກິດ ຫຼື ການບໍລິການ ທັງໃນ ແລະ ນອກລະບົບ ແລະ ຜູ້ເຮັດວຽກໃນຄົວເຮືອນ ໃຫ້ໄດ້ຂັ້ນພື້ນຖານ ແລະ ດີຂຶ້ນກວ່າເກົ່າ ສອດຄ່ອງກັບລະດັບການຂະຫຍາຍຕົວດ້ານເສດຖະກິດ-ສັງຄົມ, ກັບຄວາມຮຽກຮ້ອງຕ້ອງການທາງດ້ານວັດຖຸ, ຈິດໃຈ ແລະ ຜົນປະໂຫຍດທາງດ້ານສະຫວັດດີການສັງຄົມ;

1.2. ເພື່ອເຮັດໃຫ້ຜູ້ໃຊ້ແຮງງານໄດ້ຮັບຮູ້, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດການປັບປຸງຄ່າແຮງງານຂັ້ນຕ່ຳສຸດ ໃຫ້ແກ່ຜູ້ອອກແຮງງານ;

1.3. ເພື່ອເຮັດໃຫ້ຜູ້ອອກແຮງງານ ໄດ້ຮັບຜົນປະໂຫຍດ ຫຼື ຄ່າຕອບແທນຈາກການເຮັດວຽກຢ່າງເໝາະສົມ ແລະ ຍຸຕິທຳ ກັບລາຍໄດ້ທີ່ຕົນຄວນຈະໄດ້ຮັບຈາກການເຮັດວຽກ.

II. ຄຳນິຍາມຄ່າແຮງງານຂັ້ນຕ່ຳສຸດ

2.1. ຄ່າແຮງງານຂັ້ນຕ່ຳສຸດທີ່ກຳນົດໄວ້ໃນແຈ້ງການແນະນຳສະບັບນີ້ ແມ່ນລະດັບເງິນເດືອນ ຫຼື ຄ່າແຮງງານທີ່ລັດຖະບານປະກາດໃຊ້ໃນແຕ່ລະໄລຍະ ເພື່ອຮັບປະກັນການດຳລົງຊີວິດຂັ້ນພື້ນຖານຂອງຜູ້ອອກແຮງງານ;

2.2. ຄ່າແຮງງານຂັ້ນຕ່ຳສຸດ ເປັນເງິນເດືອນ ຫຼື ຄ່າແຮງງານຂັ້ນຕ່ຳສຸດ ທີ່ຜູ້ໃຊ້ແຮງງານຕ້ອງຈ່າຍໃຫ້ຜູ້ອອກແຮງງານທີ່ເຮັດວຽກ ບໍ່ເກີນ 26 ວັນ ຕໍ່ເດືອນ, ຫັກວັນຕໍ່ອາທິດ ແລະ ແປດຊົ່ວໂມງຕໍ່ມື້ ໂດຍບໍ່ລວມເອົາເງິນອື່ນໆເຊັ່ນ: ເງິນເຮັດວຽກເພີ່ມໂມງ, ເງິນບຳເນັດ, ເງິນຊຸກຍູ້ມາເຮັດວຽກ, ເງິນຄ່າອາຫານ, ຄ່າທີ່ພັກ, ຄ່າຮັບສົ່ງ ແລະ ເງິນນະໂຍບາຍອື່ນໆ ທີ່ເປັນສະຫວັດດີການຂອງຫົວໜ່ວຍແຮງງານເຂົ້ານຳ.

III. ເປົ້າໝາຍ ແລະ ຂອບເຂດການນຳໃຊ້.

3.1. ຄ່າແຮງງານຂັ້ນຕ່ຳສຸດ ມີເປົ້າໝາຍນຳໃຊ້ສຳລັບຜູ້ອອກແຮງງານ ທີ່ເຮັດວຽກໃນຫົວໜ່ວຍການຜະລິດ, ທຸລະກິດ ຫຼື ການບໍລິການ ຂອງທຸກພາກສ່ວນເສດຖະກິດ-ສັງຄົມ, ຜູ້ເຮັດວຽກນອກລະບົບ ແລະ ໃນຄົວເຮືອນ ທີ່ຍັງບໍ່ມີສີມື, ບໍ່ທັນມີຄວາມຊຳນານງານ ແລະ ບໍ່ມີວຸດທິທາງວິຊາຊີບໃດໆ; ຍົກເວັ້ນຜູ້ອອກແຮງງານທີ່ເຮັດວຽກນຳອົງການຕ່າງປະເທດທີ່ມີລະບຽບການສະເພາະຕ່າງຫາກ;

3.2. ຜູ້ອອກແຮງງານທີ່ມີສີມື, ມີຄວາມຊຳນານງານ ຫຼື ເຮັດວຽກໃນໄລຍະເວລາໃດໜຶ່ງມາແລ້ວ ຫຼື ມີວຸດທິດ້ານວິຊາການໃດໜຶ່ງ ຕ້ອງໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ ສູງກວ່າຄ່າແຮງງານຂັ້ນຕ່ຳສຸດ, ໂດຍກຳນົດເປັນເງິນເດືອນພື້ນຖານ ທີ່ລະບຸໄວ້ໃນກົດລະບຽບພາຍໃນຫົວໜ່ວຍແຮງງານ ຫຼື ສັນຍາແຮງງານ.

IV. ເນື້ອໃນ ແລະ ຫຼັກການກຳນົດຄ່າແຮງງານຂັ້ນຕ່ຳສຸດ.

4.1. ຄ່າແຮງງານຂັ້ນຕ່ຳສຸດຂອງຜູ້ອອກແຮງງານຕາມຂໍ້ 3.1 ທີ່ໄດ້ເຮັດວຽກຄົບຕາມເງື່ອນໄຂຕາມຂໍ້ 2.2 ຂ້າງເທິງ ແມ່ນເທົ່າກັບ 900,000 ກີບ(ເກົ້າແສນກີບຖ້ວນ) ຕໍ່ຄົນຕໍ່ເດືອນ;

4.2. ຄ່າແຮງງານຂອງຜູ້ອອກແຮງງານທີ່ເຮັດວຽກແບບມອບເໝົາ, ແບບຕາມຜະລິດຕະພັນປະຈຳຢູ່ຫົວໜ່ວຍແຮງງານ ຫຼື ສະຖານທີ່ໃດໜຶ່ງທີ່ຜູ້ໃຊ້ແຮງງານຈັດໃຫ້ນັ້ນ ໂດຍລວມແລ້ວແມ່ນບໍ່ໃຫ້ຕ່ຳກວ່າຄ່າແຮງງານຂັ້ນຕ່ຳສຸດ ທີ່ໄດ້ກຳນົດໄວ້ໃນແຈ້ງການສະບັບນີ້;

4.3. ຖ້າຜູ້ໃຊ້ແຮງງານ ນຳໃຊ້ຜູ້ອອກແຮງງານເຮັດວຽກຢູ່ໃນໜ້າວຽກທີ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ມີຄວາມຫຍຸ້ງຍາກຕໍ່ການດຳລົງຊີວິດເຊັ່ນ: ເຮັດວຽກກັບທາດເບື່ອ, ທາດເຄມີ, ກຳມັນຕະພາບລັງສີ, ພະຍາດຕິດແປດ, ກິ່ນອາຍ, ຄວັນ, ຝຸ່ນ ຫຼື ອຸໂມງໃຕ້ດິນ, ຢູ່ພື້ນນ້ຳ, ຢູ່ບ່ອນສູງ, ຢູ່ສະຖານທີ່ມີຄວາມຮ້ອນ ຫຼື ເຢັນຜິດປົກກະຕິ, ເຮັດວຽກກັບເຄື່ອງມືສັ່ນສະເທືອນເປັນປະຈຳ ແລະ ຜູ້ທີ່ຖືກສົ່ງໄປເຮັດວຽກຢູ່ເຂດທຸລະກັນດານຫ່າງໄກສອກຫຼີກ, ບ່ອນ

ທີ່ສະພາບການກິນຢູ່, ພັກເຊົາຫຍຸ້ງຍາກນັ້ນ ໃຫ້ຜູ້ໃຊ້ແຮງງານເພີ່ມຄ່າແຮງງານຂັ້ນຕໍ່າສຸດໃຫ້ຜູ້ອອກແຮງງານຜູ້ນັ້ນບໍ່ໃຫ້ຕໍ່າກວ່າ 15% ຂອງຄ່າແຮງງານຂັ້ນຕໍ່າສຸດທີ່ກໍານົດໄວ້ໃນແຈ້ງການແນະນໍາສະບັບນີ້;

4.4. ຜູ້ໃຊ້ແຮງງານຕ້ອງພິຈາລະນາຂຶ້ນເງິນເດືອນ ຫຼື ຄ່າແຮງງານໃຫ້ຜູ້ອອກແຮງງານທີ່ມີຄວາມສາມາດ, ມີຄວາມບຸກບືນ, ມີຄວາມສໍາເລັດໃນໜ້າທີ່ວຽກງານ ແຕ່ລະໄລຍະຢ່າງເໝາະສົມ. ນອກຈາກເງິນເດືອນ ຫຼື ຄ່າແຮງງານແລ້ວ, ຜູ້ໃຊ້ແຮງງານ ຄວນພິຈາລະນາໃຫ້ບໍາເນັດ, ລາງວັນ ແລະ ຜົນປະໂຫຍດອື່ນໆ ແກ່ຜູ້ອອກແຮງງານ ທີ່ມີຜົນງານດີເດັ່ນອີກດ້ວຍ.

## V. ການຈັດຕັ້ງປະຕິບັດ.

5.1. ບັນດາຫົວໜ່ວຍແຮງງານຕ່າງໆ ທີ່ເຄື່ອນໄຫວໃນຫົວໜ່ວຍການຜະລິດ, ທຸລະກິດ ຫຼື ການບໍລິການ ຂອງທຸກພາກສ່ວນເສດຖະກິດ-ສັງຄົມ, ຜູ້ອອກແຮງງານທັງທີ່ເຮັດວຽກຢູ່ໃນ ແລະ ນອກລະບົບ ແລະ ຜູ້ເຮັດວຽກໃນຄົວເຮືອນ ໃນຂອບເຂດທົ່ວປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈຂອງແຈ້ງການແນະນໍາສະບັບນີ້ຢ່າງເຂັ້ມງວດ;

5.2. ຫົວໜ່ວຍແຮງງານ ຫຼື ຜູ້ໃຊ້ແຮງງານໃດ ໄດ້ເບີກຈ່າຍຄ່າແຮງງານຂັ້ນຕໍ່າສຸດໃຫ້ຜູ້ອອກແຮງງານຂອງຕົນເທົ່າກັບ ຫຼື ສູງກວ່າລະດັບຄ່າແຮງງານຂັ້ນຕໍ່າສຸດນີ້ແລ້ວ ແມ່ນໃຫ້ສືບຕໍ່ປະຕິບັດຕາມປົກກະຕິ. ຖ້າຫົວໜ່ວຍແຮງງານ ຫຼື ຜູ້ໃຊ້ແຮງງານໃດ ຫາກເບີກຈ່າຍຕໍ່າກວ່າຕ້ອງດໍາເນີນການປັບປຸງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມແຈ້ງການແນະນໍາສະບັບນີ້;

5.3. ກົມຄຸ້ມຄອງແຮງງານ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນ ແລະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ໃນຂອບເຂດທົ່ວປະເທດ ມີໜ້າທີ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງເຜີຍແຜ່, ແນະນໍາ, ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດແຈ້ງການແນະນໍາສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ;

5.4. ແຈ້ງການແນະນໍາສະບັບນີ້ ປ່ຽນແທນແຈ້ງການແນະນໍາສະບັບເລກທີ 2951/ ຮສສ, ລົງວັນທີ 23 ພະຈິກ 2011 ແລະ ມີຜົນບັງຄັບໃຊ້ຢ່າງເປັນທາງການ ນັບແຕ່ວັນທີ 01 ເດືອນ ເມສາ (04) ປີ 2015 ເປັນຕົ້ນໄປຈົນກວ່າຈະມີການປ່ຽນແປງໃໝ່.

ລັດຖະມົນຕີວ່າການ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອ່ອນຈັນ ທໍາມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສູນກາງສະຫະພັນກຳມະບານລາວ

ເລກທີ: 245 /ສກລ.ຫກ.

ຫ້ອງການ

ນະຄອນຫລວງວຽງຈັນ, ວັນທີ: 3 MAR 2015

# ແຈ້ງການ

ເຖິງ: ທ່ານປະທານ ສະຫະພັນກຳມະບານນະຄອນຫລວງ, ແຂວງ, ກະຊວງ, ຖະບວງ, ອົງການທຽບເທົ່າຂັ້ນສູນກາງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ສະຫະພັນກຳມະບານເມືອງ ແລະ ກຳມະ ບານຮາກຖານ ໃນຂອບເຂດທົ່ວປະເທດ.

-ເລື່ອງ: ໃຫ້ເອົາໃຈໃສ່ລົງໂຄສະນາເຜີຍແຜ່ ແລະ ຕິດຕາມການນຳໃຊ້ຄ່າແຮງງານຂັ້ນຕ່ຳສຸດ ໃໝ່ ທີ່ທາງລັດຖະບານໄດ້ປະກາດໃຊ້.

-ອີງຕາມແຈ້ງການແນະນຳກ່ຽວກັບການປັບປຸງຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ທີ່ປະກາດໃຊ້ຢູ່ ສປປ ລາວ, ສະບັບເລກທີ:808/ຮສສ, ລົງວັນທີ: 09/02/2015.

-ອີງຕາມການພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການກາມະບານລາວ.

ຫ້ອງການ ສູນກາງສະຫະພັນກຳມະບານລາວ, ຂໍແຈ້ງມາຍັງທ່ານປະທານ ສະຫະພັນກຳມະບານນະຄອນຫລວງ, ແຂວງ, ກະຊວງ, ຖະບວງ, ອົງການທຽບເທົ່າຂັ້ນສູນກາງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ສະຫະພັນກຳມະບານເມືອງ ແລະ ກຳມະບານຮາກຖານ ໃນຂອບເຂດທົ່ວປະເທດ, ຊາບກ່ຽວກັບການປະກາດໃຊ້ຄ່າແຮງງານຂັ້ນຕ່ຳສຸດໃໝ່ທີ່ທາງລັດຖະບານກໍຄືທ່ານລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ອອກແຈ້ງການປະກາດໃຊ້ຄ່າແຮງງານຂັ້ນຕ່ຳສຸດໃໝ່, ສະບັບເລກທີ:808/ຮສສ, ລົງວັນທີ: 09/02/2015 ແລ້ວ, ເຊິ່ງຈະໄດ້ເລີ່ມຈັດຕັ້ງປະຕິບັດໃຊ້ຢ່າງເປັນທາງການ ນັບແຕ່ວັນທີ: 01/04/2015 ນີ້ເປັນຕົ້ນໄປ, ສະນັ້ນເພື່ອຮັບປະກັນໃຫ້ແກ່ການປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງແຮງງານ-ກຳມະກອນລາວບັນດາເຜົ່າ ທົ່ວປະເທດ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການນຳໃຊ້ຄ່າແຮງງານຂັ້ນຕ່ຳສຸດໃໝ່ນີ້ໃຫ້ໄດ້ຮັບຜົນສຳເລັດ, ຈຶ່ງໄດ້ອອກແຈ້ງການແນະນຳດັ່ງນີ້:

1.ຄ່າແຮງງານຂັ້ນຕ່ຳສຸດໃໝ່ຂອງຜູ້ອອກແຮງງານໃນຄັ້ງນີ້ແມ່ນ900,000ກີບ (ເກົ້າແສນກີບ)ຕໍ່ຄົນຕໍ່ເດືອນ, ຄິດໄລ່ເປັນມື້ແມ່ນ34,616ກີບ(ສາມສິບສີ່ພັນຫົກຮ້ອຍສິບຫົກກີບ) , ຖ້າຄິດໄລ່ເປັນຊົ່ວໂມງ

ແມ່ນ4,327ກີບ(ສີ່ພັນສາມຮ້ອຍຊາວເຈັດກີບ) ແລະ ໄດ້ລົບລ້າງການນຳໃຊ້ຄ່າແຮງງານຂັ້ນຕ່ຳສຸດໂຕເກົ່າ626,000ກີບຕໍ່ຄົນຕໍ່ເດືອນ.

2.ໃນກໍລະນີທີ່ຜູ້ອອກແຮງງານຫາກໄດ້ຂາດວຽກ ຫຼື ບໍ່ມາເຮັດວຽກ ໂດຍບໍ່ມີເຫດຜົນ, ບໍ່ໄດ້ຮັບການເຫັນດີຈາກຜູ້ໃຊ້ແຮງງານ, ແມ່ນໃຫ້ຜູ້ໃຊ້ແຮງງານຕັດເງິນຄ່າແຮງງານທີ່ຜູ້ອອກແຮງງານໄດ້ຮັບຕໍ່ມື້, ແມ່ນບໍ່ອະນຸຍາດໃຫ້ຜູ້ໃຊ້ແຮງງານຕັດເງິນຄ່າແຮງງານຂອງຜູ້ອອກແຮງງານເກີນກວ່າລາຍໄດ້ຕໍ່ວັນຂອງຜູ້ອອກແຮງງານເດັດຂາດເຊັ່ນ: ທ້າວ ກ ໄດ້ເຮັດວຽກຢູ່ຫົວໜ່ວຍແຮງງານແຫ່ງໜຶ່ງ, ຜູ້ໃຊ້ແຮງງານໄດ້ໃຫ້ຄ່າແຮງງານໃຫ້ ທ້າວ ກ ແມ່ນ 900,000ກີບ ( ເກົ້າແສນກີບ)ຕໍ່ເດືອນ, ຄິດໄລ່ເປັນມື້ແມ່ນ 34,616ກີບ(ສາມສິບສີ່ພັນຫົກຮ້ອຍສິບຫົກກີບ), ມີມື້ໜຶ່ງທ້າວ ກ ໄດ້ຂາດວຽກຈຳນວນ 01ວັນ ໂດຍບໍ່ມີເຫດຜົນ, ບໍ່ໄດ້ຮັບການເຫັນດີຈາກຜູ້ໃຊ້ແຮງງານ, ຜູ້ໃຊ້ແຮງງານສາມາດຕັດເງິນຄ່າແຮງງານຂອງທ້າວ ກ ຈຳນວນເງິນ34,616ກີບ(ສາມສິບສີ່ພັນຫົກຮ້ອຍສິບຫົກກີບ) ເທົ່ານັ້ນ, ຖ້າຜູ້ໃຊ້ແຮງງານຕັດເງິນເດືອນ ຫຼື ຄ່າແຮງງານຫລາຍກວ່າຈຳນວນ 34,616ກີບ(ສາມສິບສີ່ພັນຫົກຮ້ອຍສິບຫົກກີບ) ແມ່ນຜິດຕໍ່ກົດໝາຍແຮງງານ ຫຼື ແຈ້ງການກ່ຽວກັບຄ່າແຮງງານຕ່ຳສຸດ ທີ່ກະຊວງແຮງງານກໍ່ຄືລັດຖະບານປະກາດໃຊ້.

3.ວິທີຄິດໄລ່ຄ່າແຮງງານໃໝ່ນີ້ແມ່ນໃຫ້ເອົາຕົວເລກ900,000ກີບມາຕັ້ງແລ້ວບວກກັບເງິນລ່ວງເວລາ, ເງິນຂະຫຍັນ, ເງິນຄ່າອາຫານ ແລະ ເງິນອຸດໜູນອື່ນໆທີ່ທາງຜູ້ໃຊ້ແຮງງານມີນະໂຍບາຍໃຫ້ເຂົ້ານຳຕື່ມອີກແມ່ນຕ້ອງສູງກວ່າ900,000ກີບ ຂຶ້ນໄປ.

4.ມອບໃຫ້ບັນດາສະຫະພັນກຳມະບານນະຄອນຫລວງ, ແຂວງ, ກະຊວງ, ຖະບວງ, ອົງການທຽບເທົ່າຂັ້ນສູນກາງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ສະຫະພັນກຳມະບານເມືອງ ແລະ ກຳມະບານຮາກຖານ ໃນຂອບເຂດທົ່ວປະເທດຈົ່ງຮັບຮູ້, ນຳເອົາເນື້ອໃນແຈ້ງການສະບັບນີ້ ແລະ ສະບັບເລກທີ:808/ຮສສ, ລົງວັນທີ: 09/02/2015 ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ລົງໄປເຜີຍແຜ່ໃຫ້ພະນັກງານກຳມະບານອາຊີບ, ເຄິ່ງອາຊີບ, ຄະນະຮາກຖານ ແລະ ໜ່ວຍກຳມະບານ ຫຼື ຜູ້ຕ່າງໜ້າຜູ້ອອກແຮງງານ ແລະ ຜູ່ອກແຮງງານ ຢູ່ໃນຂອບຄວາມຮັບຜິດຊອບຂອງຕົນເອງໃຫ້ຮັບຮູ້, ເຂົ້າໃຈ ແລະ ສາມາດຈັດຕັ້ງປະຕິບັດໄດ້ນັບແຕ່ວັນທີ:01/04/2015 ເປັນຕົ້ນໄປ; ພ້ອມກັນນີ້ມີໜ້າທີ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງເຜີຍແຜ່, ແນະນຳ, ຊຸກຍູ້ ແລະ ກວດກາການຈັດຕັ້ງປະຈິບັດຕາມເນື້ອໃນແຈ້ງການສະບັບສະບັບເລກທີ:808/ຮສສ, ລົງວັນທີ: 09/02 /2015 ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ, ໃນກໍລະນີທີ່ພົບເຫັນບັນຫາໃນການຈັດຕັ້ງປະຕິບັດນຳໃຊ້ຄ່າແຮງງານຂັ້ນຕ່ຳສຸດໃໝ່ນີ້ແມ່ນໃຫ້ລາຍງານມາຍັງກົມປົກປ້ອງແຮງງານ ສູນກາງສະຫະພັນກຳ ມະບານລາວ ເປັນລາຍລັກອັກສອນ ຫຼື ຈະໂທເຂົ້າເບີສາຍດ່ວນຂອງສູນກາງສະຫະພັນກຳມະບານລາວ ທີ່ເບີ: 020-28444515.

ດັ່ງນັ້ນ, ຫ້ອງການ ສູນກາງສະຫະພັນກຳມະບານລາວ ຈຶ່ງໄດ້ອອກແຈ້ງການສະບັບນີ້ມາຍັງທ່ານ ເພື່ອຮັບຊາບ ແລະ ລົງຈັດຕັ້ງປະຕິບັດໃຫ້ສຳເລັດ ດ້ວຍ.

ຮຽນມາດ້ວຍຄວາມນັບຖືເປັນຢ່າງສູງ.

**ຫົວໜ້າຫ້ອງການ**
**ສູນກາງສະຫະພັນກຳມະບານລາວ**

ບ. ອາລີ ວົງໜໍ່ບຸນທຳ